# ຄຳຮ້ອງຂໍໃຫ້ອອກຄຳສັ່ງປົກປ້ອງຮັກສາ (ທຸກກໍຣະນີ)
# PETITION FOR ORDER FOR PROTECTION (All Cases)

ເອກສານນີ້ຂໍຮ້ອງໃຫ້ສານປ້ອງກັນທ່ານ ແລະ/ຫລື ລູກຂອງທ່ານຈາກການຜິດຖຽງຮຸນແຮງໃນຄອບຄົວ. ເອກສານເອົາລາຍລະອຽດໃຫ້ສານວ່າເປັນຫຍັງທ່ານຕ້ອງການຄຳສັ່ງປົກປ້ອງຮັກສາ. ທ່ານບໍ່ຈຳເປັນທີ່ຈະຕ້ອງຖືກບາດເຈັບທາງດ້ານຮ່າງກາຍເພື່ອຈະມີສິດໄດ້ຮັບການປົກປ້ອງຮັກສາຈາກສານ. ຖ້າຫາກວ່າທ່ານສາມາດບອກສານຮູ້ວ່າເປັນຫຍັງທ່ານເກີດຄວາມຢ້ານກົວວ່າທ່ານຈະຖືກທຳຮ້າຍຮ່າງກາຍ, ທ່ານ**ອາດ**ຈະສາມາດໄດ້ໃບຄຳສັ່ງຈາກສານ.

ໜັງສືນີ້ສາມາດໃຊ້ເພື່ອຈະຂໍເອົາທັງຄຳສັ່ງປ້ອງກັນຊົ່ວຄາວທັນທີ ແລະ ຄຳສັ່ງປ້ອງກັນຣະຍະຍາວ. ຖ້າຫາກວ່າທ່ານຕ້ອງການໃຫ້ປົກປ້ອງຮັກສາທ່ານໃນທັນທີ, ແລະ ສານກໍ່ເຫັນວ່າມີຄວາມສຸກເສີນແທ້, ທາງສານກໍ່ຈະອອກໜັງສືປົກປ້ອງເປັນສບັບຊົ່ວຄາວໃຫ້ທ່ານໄປກ່ອນຊຶ່ງສາມາດກຳນົດໃຊ້ການໄດ້ຈົນກວ່າການຟັງເຣື່ອງຈະຖືກຈັດຂຶ້ນ, ຕາມປົກກະຕິແລ້ວພາຍໃນ 14 ວັນ. ໃນເວລາຟັງເຣື່ອງອັນນັ້ນ, ສານກໍ່ຈະພິຈາຣະນາວ່າຄວນອອກຄຳສັ່ງການປົກປ້ອງຣະຍະຍາວ ຫລື ເຕັມທີ່ຄວນຈະຖືກສັ່ງອອກມາ ຫລື ບໍ່. ຈຳເລີຍມີສິດທີ່ຈະເຂົ້າມາຮ່ວມໃນການຟັງເຣື່ອງອັນນັ້ນ. ຖ້າທ່ານຕ້ອງການຄວາມຊ່ວຍເຫລືອປົກປ້ອງຈາກສານຊົ່ວຄາວ ແລະ ເປັນເວລາຍາວນານທັງສອງຢ່າງ, ທ່ານຈຳເປັນຈະຕ້ອງໄດ້ໝາຍໃສ່ ແລະ ປະກອບໃບຄຳຮ້ອງທັງສອງແຖວຢູ່ໃນໜ້າທີ່ສອງ ແລະ ສາມໃນເວລາດຽວກັນ.

## ຣາຍລະອຽດເບື້ອງຕົ້ນ (ໜ້າທີ 1)

ຂຽນບອກຊື່ຂອງທ່ານໃນນາມເປັນຜູ້ສເນີ ຫລື ຜູ້ຮ້ອງທຸກ "Petitioner" ບຸກຄົນຜູ້ທີ່ທ່ານຕ້ອງການການປ້ອງກັນຈາກທ່ານແມ່ນຈຳເລີຍ ຫລື ຜູ້ຕອບ "Petitioner" ຈົ່ງຂຽນຊື່ຂອງຈຳເລີຍໃສ່.

**<u>ໃຜຕ້ອງການປົກປ້ອງຮັກສາ</u>** (ຄຳຖາມຂໍ້ທີ 1)

ສານຕ້ອງຮູ້ຈັກວ່າແມ່ນໃຜຕ້ອງການການປົກປ້ອງ. ໃຫ້ຂີດໝາຍໃສ່ບ່ອນທຳອິດຖ້າທ່ານຕ້ອງການປົກປ້ອງຈາກສານ. ໃຫ້ຂີດໝາຍໃສ່ໃນບ່ອນທີສອງຖ້າຫາກວ່າຄົນໃດຄົນນຶ່ງຢູ່ໃນຄອບຄົວ ຫລື ເຮືອນຊານຂອງທ່ານຕ້ອງການການປົກປ້ອງ. ທ່ານອາດຈະຂີດໝາຍເອົາໝົດທັງສອງບ່ອນກໍ່ໄດ້.

**<u>ບ່ອນຢູ່ອາສັຍ</u>** (ຄຳຖາມຂໍ້ທີ 2)

ສານຕ້ອງການຮູ້ວ່າທ່ານຢູ່ບ່ອນໃດເພື່ອຈະພິຈາຣະນາເບິ່ງວ່າສານສາມາດອອກຄຳສັ່ງປົກປ້ອງໄດ້ ຫລື ບໍ່. ໃຫ້ຂີດໝາຍໃສ່ໃນບ່ອນດຽວເພື່ອບອກສານກ່ຽວກັບບ່ອນທີ່ທ່ານຢູ່ໃນປັດຈຸບັນນີ້.

**<u>ອາຍຸ</u>** (ຄຳຖາມຂໍ້ທີ 3)

ສານຕ້ອງການຮູ້ອາຍຸໝົດທັງສອງຝ່າຍ. ໝາຍໃສ່ໃນບ່ອນນຶ່ງຂອງຫລາຍບ່ອນສຳລັບອາຍຸຂອງທ່ານ. ໝາຍໃສ່ບ່ອນນຶ່ງຂອງຫລາຍບ່ອນສຳລັບອາຍຸຂອງຈຳເລີຍ.

<u>ຄວາມສຳພັນ (ຄຳຖາມຂໍ້ທີ 4)</u>

ສານຕ້ອງຮູ້ຄວາມສຳພັນຣະຫວ່າງທ່ານ ແລະ ຈຳເລີຍ. ຈົ່ງໝາຍໃສ່ທຸກໆບ່ອນທີ່ອະທິບາຍສະພາບຂອງທ່ານ. ຖ້າຫາກວ່າທ່ານຍື່ນໃນນາມຂອງເດັກຕ່ຳກວ່າກະສຽນ, ຄວາມສຳພັນຂອງເດັກຕ່ຳກວ່າກະສຽນຕໍ່ຈຳເລີຍໄດ້ຖືກກ່າວໃວ້ໃນຂໍ້ 5.

**<u>ຂໍ້ມູນປະຈຳຕົວຂອງເດັກຕ່ຳກວ່າກະສຽນ</u>** (ຄຳຖາມຂໍ້ທີ 5)

ຖ້າທ່ານບໍ່ມີເດັກຕ່ຳກວ່າກະສຽນ, ກໍ່ໃຫ້ໝາຍໃສ່ໃນບ່ອນບອກວ່າ "ບໍ່ມີເດັກຕ່ຳກວ່າກະສຽນທີ່ກ່ຽວຂ້ອງ" ຖ້າຫາກມີເດັກຕ່ຳກວ່າກະສຽນ, ສານກໍ່ຕ້ອງການຮູ້ກ່ຽວກັບເດັກຢູ່ໃນເຣື່ອງນີ້. ໃຫ້ບອກຊື່, ອາຍຸ, ຜິວພັນ ແລະ ເພດຂອງເດັກ. ບອກຄວາມສຳພັນຣະຫວ່າງທ່ານກັບເດັກວ່າເປັນຫຍັງ (ຕົວຢ່າງ, ລູກຊາຍ). ຂຽນບອກວ່າເດັກມີຄວາມສຳພັນຕໍ່ຈຳເລີຍແນວໃດ. ຈົ່ງຂຽນບອກວ່າປະຈຳວັນເດັກຢູ່ນຳຜູ້ໃດ, (ຕົວຢ່າງວ່າ: ຂ້ອຍ, ພໍ່ເຖົ້າແມ່ເຖົ້າ, ຈຳເລີຍ).

<u>**ເຣື່ອງຢູ່ໃນສານ** (ຄຳຖາມຂໍ້ທີ 6)</u>

ຄະດີນີ້ອາດຈະບໍ່ແມ່ນການດຳເນີນການທາງສານຄັ້ງທຳອິດທີ່ກ່ຽວຂ້ອງກັບທ່ານ, ຫລື ເດັກນ້ອຍຕ່ຳກວ່າກະສຽນ, ແລະ ຈຳເລີຍ. ສານຈະຕ້ອງການຮູ້ຈັກກ່ຽວກັບເຣື່ອງການຂຶ້ນສານທຸກໆຄັ້ງ ຫລື ຄຳສັ່ງປົກປ້ອງຮັກສາຈາກສານ, ຄຳສັ່ງຫ້າມຝ່າຍຕຣົງກັນຂ້າມບໍ່ໃຫ້ເຂົ້າກາຍໄປໃນເຂດແດນທີ່ກຳນົດໃຫ້, ຫລື ຄຳສັ່ງຫ້າມການຕິດຕໍ່ພົວພັນເພື່ອສານຈະບໍ່ໄດ້ອອກຄຳສັ່ງທີ່ອາດຈະຂັດຂ້ອງກັບຄຳສັ່ງຈາກສານບ່ອນອື່ນ.

ຖ້າຫາກມີເຣື່ອງການຂຶ້ນສານອື່ນໆ ຫລື ຄຳສັ່ງປັບປັ້ງ, ປົກປ້ອງຮັກສາ ຫລື ຫ້າມການຕິດຕໍ່ພົວພັນທີ່ກ່ຽວຂ້ອງກັບທ່ານ, ຫລື ເດັກຕ່ຳກະສຽນ, ແລະ ຈຳເລີຍ, ໃຫ້ຂຽນບອກຊື່ຂອງກໍຣະນີສານ (ຊື່ຂອງທຸກຝ່າຍ), ເລກເອກສານ (ຖ້າຮູ້ຈັກ), ແລະ ສານ (ປະຈຳເຂດ, ປະຈຳເມືອງ, ຫລື ສານສູງສຸດ) ແລະ ເທສບານໃສ່ໃນແຖວທີ່ຖືກເອົາໃຫ້)

## **ຄຳຮ້ອງຂໍເພື່ອການປົກປ້ອງຮັກສາ** (ໜ້າ 2)

ມີການປົກປ້ອງຊະນິດຕ່າງໆທີ່ທ່ານອາດຈະຕ້ອງການ. ເພື່ອຂໍໃຫ້ສານອອກຄຳສັ່ງປົກປ້ອງຮັກສາຊົ່ວຄາວທີ່ໃຊ້ການໄດ້ໂດຍທັນທີໂລດ ແລະ ຍັງມີຜົນບັງຄັບໃຊ້ໄດ້ຢູ່ຈົນກວ່າຮອດເວລາຟັງເຣື່ອງສຳລັບຄຳສັ່ງປົກປ້ອງຮັກສາຣະຍະຍາວ, ໃຫ້ຂີດໝາຍໃສ່ທຸກໆຢ່າງທີ່ທ່ານອາດຈະຕ້ອງການຢູ່ໃນ**ແຖວຊ້າຍມືສຸດໝູ່ຢູ່ໜ້າ 2 ແລະ 3.** ເພື່ອຂໍໃຫ້ສານອອກຄຳສັ່ງສຳລັບການປົກປ້ອງຮັກສາຣະຍະຍາວ (ເຕັມທີ່), ຊຶ່ງສານອາດຈະອະນຸມັດໃຫ້ຫລັງຈາກການຟັງເຣື່ອງ, ໃຫ້ຂີດໝາຍໃສ່ທຸກໆຢ່າງທີ່ທ່ານອາດຈະຕ້ອງການຢູ່ແຖວທີສອງຢູ່ໃນໜ້າ **2 ແລະ 3.**

1. ສິ່ງທຳອິດຂໍໃຫ້ສານເພື່ອສັ່ງຫ້າມຈຳເລີຍບໍ່ໃຫ້ທຳຮ້າຍຮ່າງກາຍ, ຕິດຕາມລົບກວນ, ຫລື ລົບກວນທ່ານ ແລະ/ຫລື ເດັກນ້ອຍຜູ້ທີ່ທ່ານບອກຊື່.
   - ກ. ໝາຍໃສ່ໃນບ່ອກ "me ທ່ານເອງ" ຖ້າຫາກວ່າທ່ານເອງຕ້ອງການປົກປ້ອງ.
   - ຂ. "ເດັກນ້ອຍຕ່ຳກວ່າກະສຽນຜູ້ທີ່ບົ່ງຊື່ຢູ່ວັກທີ 5 ຢູ່ຂ້າງເທິງນີ້" ຖ້າຫາກວ່າເດັກນ້ອຍ<u>ທຸກໆຄົນ</u>ທີ່ທ່ານໄດ້ບົ່ງຊື່ຕ້ອງການ ການປົກປ້ອງ.
   - ຄ. ໝາຍໃສ່ "ເດັກຕ່ຳກວ່າກະສຽນເຫລົ່ານີ້ເທົ່ານັ້ນ" ຖ້າຫາກມີເດັກນ້ອຍຜູ້ໃດຜູ້ນຶ່ງໃນນີ້ຫາກຕ້ອງການການປົກປ້ອງຈາກສານ. ຖ້າທ່ານໝາຍໃສ່ບ່ອກນີ້, ໃຫ້ແນ່ໃຈວ່າຈະຂຽນຊື່ຂອງເດັກນ້ອຍຜູ້ທີ່ຕ້ອງການປົກປ້ອງຈາກສານ.

   ສຳລັບການຂໍໃຫ້ສານປົກປ້ອງຮັກສາແບບຊົ່ວຄາວ, ໃຫ້ໝາຍໃສ່ໃນບ່ອກແຖວຊ້າຍສຸດ. ສຳລັບການປົກປ້ອງຣະຍະຍາວ, ໃຫ້ໝາຍໃສ່ແຖວທີສອງ.

2. ສິ່ງທີສອງຂໍຮ້ອງໃຫ້ສານອອກຄຳສັ່ງໃຫ້ຈຳເລີຍບໍ່ໃຫ້ຕິດຕໍ່ມາຫາທ່ານ ແລະ/ຫລື ເດັກ, ຜູ້ທີ່ທ່ານບອກຊື່.

   ສຳລັບການຂໍໃຫ້ສານປົກປ້ອງຮັກສາແບບຊົ່ວຄາວ, ໃຫ້ໝາຍໃສ່ໃນບ່ອກແຖວຊ້າຍສຸດ. ສຳລັບການປົກປ້ອງຣະຍະຍາວ, ໃຫ້ໝາຍໃສ່ແຖວທີສອງ.

3. ສິ່ງທີສາມຂໍຮ້ອງໃຫ້ສານສັ່ງໃຫ້ຈຳເລີຍບໍ່ໃຫ້ຢູ່ໃນບ້ານຂອງທ່ານ, ບ່ອນທຳງານ, ຫລື ໂຮງຮຽນ ຫລື ບ່ອນຝາກເດັກນ້ອຍ ຫລື ໂຮງຮຽນຂອງເດັກຕ່ຳກວ່າກະສຽນ. ຖ້າຫາກມີບ່ອນໃດບ່ອນນຶ່ງອີກທີ່ທ່ານຕ້ອງການລວມໃສ່ນຳ. ກໍ່ໃຫ້ຂຽນບອກໃນບ່ອນທີ່ເອີ້ນວ່າອື່ນໆ "Other" ທ່ານມີສິດທີ່ຈະສເນີໃຫ້ເກັບຮັກສາທີ່ຢູ່ຂອງທ່ານໃວ້ບໍ່ໃຫ້ເປີດເຜີຍ (ຖືເປັນຄວາມລັບ). ເງື່ອນໄຂປັບປັ້ງຢູ່ໃນຄຳສັ່ງປົກປ້ອງຊົ່ວຄາວ ແລະ ຄຳສັ່ງປົກປ້ອງເຕັມທີ່ມີບ່ອນວາງໃວ້ໃຫ້ທ່ານເພື່ອຈະຂຽນທີ່ຢູ່ເຮືອນຂອງທ່ານລົງໄປ. ທ່ານຈຳເປັນຕ້ອງຂຽນທີ່ຢູ່ເຮືອນຂອງທ່ານໃສ່ຖ້າຫາກວ່າທ່ານເປັນຫວ່ງນຳຄວາມປອດພັຍ ຂອງທ່ານ ຫລື ການຂີ້ລັກເອົາຊື່ປະຈຳຕົວ. ເຖິງຢ່າງໃດກໍ່ຕາມ. ການບັງຄັບໃຊ້ຄຳສັ່ງຈະງ່າຍຂຶ້ນກວ່າເກົ່າຖ້າຫາກວ່າທີ່ຢູ່ຂອງທ່ານໄດ້ຖືກລວມຢູ່ນຳ. ຖ້າຫາກວ່າທ່ານຕັດສິນໃຈທີ່ຈະລວມທີ່ຢູ່ຂອງທ່ານໃສ່, ກະຣຸນາຂຽນທີ່ຢູ່ອັນຄົບຖ້ວນລວມທັງເມືອງໃສ່ນຳ.

   ສຳລັບການຂໍໃຫ້ສານປົກປ້ອງຮັກສາແບບຊົ່ວຄາວ, ໃຫ້ໝາຍໃສ່ໃນບ່ອກແຖວຊ້າຍສຸດ. ສຳລັບການປົກປ້ອງຣະຍະຍາວ, ໃຫ້ໝາຍໃສ່ແຖວທີສອງ.

4. ສິ່ງທີສີ່ຂໍຮ້ອງໃຫ້ສານອອກຄໍາສັ່ງໃຫ້ຈໍາເລີຍອອກໜີໄປຈາກເຮືອນບ່ອນທີ່ທ່ານທັງສອງອາສັຍຢູ່ຮ່ວມກັນເພື່ອຈະເອົາສິດທັງໝົດໃນການຢູ່ເຮືອນໃຫ້ແກ່ທ່ານ. ທ່ານມີສິດທີ່ຈະສເນີໃຫ້ຮັກສາທີ່ຢູ່ຂອງທ່ານໄວ້ບໍ່ໃຫ້ເປີດເຜີຍ (ຖືເປັນຄວາມລັບ). ເງື່ອນໄຂປັບປັ້ງຢູ່ໃນຄໍາສັ່ງປົກປ້ອງຊົ່ວຄາວ ແລະ ຄໍາສັ່ງປົກປ້ອງເຕັມທີ່ ມີບ່ອນວາງໄວ້ໃຫ້ທ່ານເພື່ອຈະຂຽນທີ່ຢູ່ເຮືອນຂອງທ່ານລົງໄປ. ທ່ານບໍ່ໄດ້ຖືກ ບັງໃຫ້ຂຽນທີ່ຢູ່ເຮືອນຂອງທ່ານໃສ່ຖ້າຫາກວ່າທ່ານເປັນຫ່ວງນໍາຄວາມປອດພັຍຂອງທ່ານ ຫລື ການຂີ້ລັກເອົາຊື່ປະຈໍາຕົວ. ເຖິງຢ່າງໃດກໍ່ຕາມ. ການບັງຄັບໃຊ້ຄໍາສັ່ງຈະງ່າຍຂຶ້ນກວ່າເກົ່າຖ້າຫາກວ່າທີ່ຢູ່ຂອງທ່ານໄດ້ຖືກ ລວມຢູ່ນໍາ. ຖ້າຫາກວ່າທ່ານຕັ ດສິນໃຈທີ່ຈະລວມທີ່ຢູ່ຂອງທ່ານໃສ່, ກະຣຸນາຂຽນທີ່ຢູ່ອັນຄົບຖ້ວນລວມທັງເມືອງໃສ່ນໍາ.

ສໍາລັບການຂໍໃຫ້ສານປົກປ້ອງຮັກສາແບບຊົ່ວຄາວ, ໃຫ້ໝາຍໃສ່ໃນບ່ອກແຖວຊ້າຍສຸດ. ສໍາລັບການປົກປ້ອງຣະຍະຍາວ, ໃຫ້ໝາຍໃສ່ແຖວທີສອງ.

5. ສິ່ງທີຫ້າຂໍຮ້ອງໃຫ້ສານອອກຄໍາສັ່ງຫ້າມບໍ່ໃຫ້ຈໍາເລີຍເຂົ້າມາພາຍໃນໂດຍຮູ້ຈັກດີ ຫລື ຢູ່ໃນພາຍໃນໂດຍຮູ້ຈັກດີພາຍໃນຣະຍະຫ່າງອັນເຈາະຈົງ (ເຊັ່ນວ່າ 100 ຟີດ, 2 ບລ໋ອກ) ຈາກບ້ານຂອງທ່ານ, ບ່ອນເຮັດວຽກ ຫລື ໂຮງຮຽນ; ຫລື ບ່ອນຝາກເດັກ ຫລື ໂຮງຮຽນຂອງເດັກຕໍ່າກວ່າກະສຽນ. ຖ້າຫາກມີບ່ອນອື່ນບ່ອນໃດບ່ອນນຶ່ງທີ່ທ່ານຕ້ອງການຢາກລວມໃສ່ຕື່ມໃສ່ໃນບ໋ອກທີ່ຖືກເອີ້ນວ່າ "ອື່ນໆ"

ສໍາລັບການຂໍໃຫ້ສານປົກປ້ອງຮັກສາແບບຊົ່ວຄາວ, ໃຫ້ໝາຍໃສ່ໃນບ໋ອກແຖວຊ້າຍສຸດ. ສໍາລັບການປົກປ້ອງຣະຍະຍາວ, ໃຫ້ໝາຍໃສ່ແຖວທີສອງ.

6. ສິ່ງທີຫົກຂໍຮ້ອງໃຫ້ສານອະນຸມັດໃຫ້ທ່ານຄອບຄອງຊັບສິນສ່ວນຕົວອັນຈໍາເປັນ ແລະ ສໍາຄັນ. ກະຣຸນາຂຽນລາຍການຊັບສິນສ່ວນຕົວ. ("ຊັບສິນສ່ວນຕົວ ແລະ ສໍາຄັນ" ໝາຍຄວາມເຖິງສິ່ງຂອງທີ່ຈໍາເປັນສໍາລັບສຸຂະພາບ, ຄວາມຢູ່ເຢັນເປັນສຸກ, ແລະຊີວິດປະຈໍາວັນອັນແທ້ຈິງຂອງບຸກຄົນນັ້ນ. "ຊັບສິນສ່ວນຕົວອັນຈໍາເປັນ ແລະ ສໍາຄັນ" ລວມເອົາແຕ່ບໍ່ຈໍາກັດໄປເຖິງເຄື່ອງນຸ່ງຫົ່ມ, ອູ່ເດັກນ້ອຍ, ຕຽງນອນ, ເອກສານ, ຢາປິ່ນປົວ, ແລະ ສິ່ງຂອງອະນາມັຍສ່ວນຕົວ. (RCW 26.50.010(7)).

ສໍາລັບການຂໍໃຫ້ສານປົກປ້ອງຮັກສາແບບຊົ່ວຄາວ, ໃຫ້ໝາຍໃສ່ໃນບ໋ອກແຖວຊ້າຍສຸດ. ສໍາລັບການປົກປ້ອງຣະຍະຍາວ, ໃຫ້ໝາຍໃສ່ແຖວທີສອງ.

7. ສິ່ງທີເຈັດຂໍຮ້ອງໃຫ້ສານທີ່ຈະອະນຸມັດໃຫ້ທ່ານໃນການໃຊ້ຣົດ (ຕົວຢ່າງ ຣົດ ຟອດ ໂທຣັສ, ສີຟ້າ ປີ 1994 ເລກທະບຽນຣົດ XYZ 123).

ສໍາລັບການຂໍໃຫ້ສານປົກປ້ອງຮັກສາແບບຊົ່ວຄາວ, ໃຫ້ໝາຍໃສ່ໃນບ໋ອກແຖວຊ້າຍສຸດ. ສໍາລັບການປົກປ້ອງຣະຍະຍາວ, ໃຫ້ໝາຍໃສ່ແຖວທີສອງ.

8. ສິ່ງທີແປດ "ອື່ນ Other" ແມ່ນບ່ອນທີ່ທ່ານຈະຂຽນໃສ່ສິ່ງໃດສິ່ງນຶ່ງຊຶ່ງບໍ່ໄດ້ກ່າວຢູ່ໃນຂ້າງເທິງນີ້.

ສໍາລັບການຂໍໃຫ້ສານປົກປ້ອງຮັກສາແບບຊົ່ວຄາວ, ໃຫ້ໝາຍໃສ່ໃນບ໋ອກແຖວຊ້າຍສຸດ. ສໍາລັບການປົກປ້ອງຣະຍະຍາວ, ໃຫ້ໝາຍໃສ່ແຖວທີສອງ.

9. ສິ່ງທີເກົ້າຂໍໃຫ້ສານໃຫ້ອອກຄໍາສັ່ງໃຫ້ຈໍາເລີຍໄປຮັບການປິ່ນປົວ ຫລື ໄປອົບລົມປຶກສາ.

ສໍາລັບການປົກປ້ອງຣະຍະຍາວ, ໃຫ້ໝາຍໃສ່ໃນແຖວທີສອງ. (ຂໍ້ນີ້ບໍ່ມີຢູ່ໃນໃບຄໍາສັ່ງສານປົກປ້ອງແບບຊົ່ວຄາວ).

10. ສິ່ງທີສິບຂໍຮ້ອງໃຫ້ສານບັງໃຫ້ຈໍາເລີຍທີ່ຈະຈ່າຍຄ່າທໍານຽມ ແລະ ຄ່າໃຊ້ຈ່າຍໃດທີ່ກ່ຽວຂ້ອງກັບເຣື່ອງນີ້ (ຄ່າທໍານຽມ ແລະ ຄ່າໃຊ້ຈ່າຍຕ່າງໆເຫລົ່ານີ້ຈະລວມທັງຄ່າສານ, ຄ່າທໍານຽມບໍຣິການ ແລະ ຄ່າທະນາຍຄວາມອັນເໝາະສົມ).

ສໍາລັບການປົກປ້ອງຣະຍະຍາວ, ໃຫ້ໝາຍໃສ່ໃນແຖວທີສອງ. (ຂໍ້ນີ້ບໍ່ມີຢູ່ໃນໃບຄໍາສັ່ງສານປົກປ້ອງແບບຊົ່ວຄາວ).

11. ສິ່ງທີສິບເອັດຂໍຮ້ອງໃຫ້ສານອອກຄໍາສັ່ງປົກປ້ອງນານກວ່ານຶ່ງປີຂຶ້ນໄປ, ຈົ່ງໝາຍບ່ອນນີ້ເທົ່ານັ້ນຖ້າຫາກວ່າມີເຫດຜົນທີ່ຈະເຊື່ອໄດ້ວ່າຈໍາເລີຍຈະຄືນຜິດຖຽງຮ້າຍແຮງຢູ່ໃນຄອບຄົວໃໝ່ອີກຕໍ່ທ່ານເມື່ອຄໍາສັ່ງໄດ້ໝົດກໍານົດໃນນຶ່ງປີແລ້ວເທົ່ານັ້ນ.

ສໍາລັບການປົກປ້ອງຣະຍະຍາວ, ໃຫ້ໝາຍໃສ່ໃນແຖວທີສອງ. (ຂໍ້ນີ້ບໍ່ມີຢູ່ໃນໃບຄໍາສັ່ງສານປົກປ້ອງແບບຊົ່ວຄາວ).

**ຖ້າຫາກເຣື່ອງນີ້ບໍ່ມີເດັກນ້ອຍຕໍ່າກວ່າກະສຽນເຂົ້າມາຫຍຸ້ງກ່ຽວນໍາ ຢ່າສູ່ໝາຍໃສ່ໃນຄໍາຖາມຂໍ້ທີ 12, 13 ແລະ 14.**

**ຖ້າຫາກວ່າທ່ານຂໍຮ້ອງເອົາການປົກປ້ອງຮັກສາທີ່ກ່ຽວຂ້ອງນໍາເດັກນ້ອຍຕໍ່າກວ່າກະສຽນໃຫ້ຕອບໃສ່ໃນຄໍາຖາມຂໍ້ທີ 12, 13 ແລະ 14.**

12. ສິ່ງທີສິບສອງຂໍຮ້ອງໃຫ້ສານເພື່ອຈະມອບໝາຍໃຫ້ທ່ານເປັນຜູ້ເບິ່ງແຍງດູແລ, ການຄຸ້ມຄອງ ແລະ ການຄວບຄຸມເດັກນ້ອຍຜູ້ທີ່ໄດ້ບົ່ງຊື່ຊົ່ວຄາວໃຫ້ແກ່ທ່ານ.

ສໍາລັບການຂໍໃຫ້ສານປົກປ້ອງຮັກສາແບບຊົ່ວຄາວ, ໃຫ້ໝາຍໃສ່ໃນບ່ອນແຖວຊ້າຍສຸດ. ສໍາລັບການປົກປ້ອງຣະຍະຍາວ, ໃຫ້ໝາຍໃສ່ແຖວທີສອງ.

13. ສິ່ງທີສິບສາມຂໍຮ້ອງໃຫ້ສານຫ້າມບໍ່ໃຫ້ຈໍາເລີຍເຂົ້າມາກີດກັ້ນແຊກແຊງໃນການດູແລເບິ່ງແຍງເດັກຜູ້ທີ່ທ່ານບົ່ງຊື່.

ສໍາລັບການຂໍໃຫ້ສານປົກປ້ອງຮັກສາແບບຊົ່ວຄາວ, ໃຫ້ໝາຍໃສ່ໃນບ່ອນແຖວຊ້າຍສຸດ. ສໍາລັບການປົກປ້ອງຣະຍະຍາວ, ໃຫ້ໝາຍໃສ່ແຖວທີສອງ.

14. ສິ່ງທີສິບສີ່ຂໍຮ້ອງໃຫ້ສານສັ່ງບໍ່ໃຫ້ຈໍາເລີຍນໍາພາເດັກນ້ອຍຜູ້ທີ່ຖືກບົ່ງຊື່ອອກຈາກຣັດ.

ສໍາລັບການຂໍໃຫ້ສານປົກປ້ອງຮັກສາແບບຊົ່ວຄາວ, ໃຫ້ໝາຍໃສ່ໃນບ່ອນແຖວຊ້າຍສຸດ. ສໍາລັບການປົກປ້ອງຣະຍະຍາວ, ໃຫ້ໝາຍໃສ່ແຖວທີສອງ.

## ການຂໍຮ້ອງຄວາມຊ່ວຍເຫລືອພິເສດຈາກເຈົ້າໜ້າທີ່ຕໍາຣວດ

ທ່ານອາດຈະຕ້ອງການຄວາມຊ່ວຍເຫລືອພິເສດຈາກຕໍາຣວດ. ໃຫ້ຂີດໝາຍເອົາໝົດທຸກຢ່າງທີ່ທ່ານຄິດວ່າທ່ານຕ້ອງການໃຫ້ຕໍາຣວດຊ່ວຍເຫລືອທ່ານໃນການເກັບກໍາເອົາມາ

1. ສິ່ງທໍາອິດຂໍໃຫ້ສານສັ່ງໃຫ້ເຈົ້າໜ້າທີ່ຕໍາຣວດຊ່ວຍເຫລືອພາທ່ານກັບຄືນໄປຢູ່ເຮືອນຂອງທ່ານ.

2. ສິ່ງທີສອງຂໍໃຫ້ສານສັ່ງໃຫ້ເຈົ້າໜ້າທີ່ຕໍາຣວດຊ່ວຍເຫລືອພາໄປເອົາຣົດທ່ານຄືນ.

3. ສິ່ງທີສາມຂໍໃຫ້ສານສັ່ງໃຫ້ເຈົ້າໜ້າທີ່ຕໍາຣວດຊ່ວຍເຫລືອພາທ່ານໄປເອົາສິ່ງຂອງສ່ວນຕົວຂອງທ່ານຄືນ. ຈົ່ງໝາຍໃສ່ໃນບ່ອນຕາມເໝາະສົມຖ້າຫາກທ່ານຕ້ອງການໃຫ້ເຈົ້າໜ້າທີ່ຕໍາຣວດຊ່ວຍເຫລືອພາທານໄປເອົາສິ່ງຂອງຂອງທ່ານທີ່ບ້ານຢູ່ຮ່ວມກັນ, ບ້ານຂອງຈໍາເລີຍ ຫລື ສະຖານທີ່ບ່ອນອື່ນໆ.

4. ສິ່ງທີສີ່ຂໍໃຫ້ສານສັ່ງໃຫ້ເຈົ້າໜ້າທີ່ຕຳຣວດຊ່ວຍເຫລືອພາທ່ານໄປເອົາການຄຸ້ມຄອງລູກຂອງທ່ານຜູ້ທີ່ທ່ານບົ່ງຊີ້. (ເຈົ້າໜ້າທີ່ຈະມີສິດທິຂອບເຂດຈຳກັດທີ່ຈະເຮັດໄດ້. ຈົ່ງຕິດຕໍ່ໄປຍັງສະຖານນີຕຳຣວດທ້ອງຖິ່ນຂອງທ່ານເພື່ອສອບຖາມ).

5. ສິ່ງສຸດທ້າຍໃຫ້ທ່ານຂໍເອົາຄວາມຊ່ວຍເຫລືອຢ່າງອື່ນຊຶ່ງທ່ານອາດຈະຕ້ອງການຈາກຕຳຣວດ.

## ຄຳໃຫ້ການຂອງໂຈດ (ຜູ້ຮ້ອງທຸກ)

ຄຳໃຫ້ການຂອງໂຈດ (ຜູ້ຮ້ອງທຸກ) ແມ່ນເພື່ອຈະອະທິບາຍໃຫ້ແກ່ສານວ່າດ້ວຍເຫດໃດທີ່ທ່ານຕ້ອງການປົກປ້ອງຈາກສານ. ເອກສານອັນນີ້ຈະຖືກເກັບໄວ້ຢູ່ໃນບັນທຶກຂອງສານຊຶ່ງແມ່ນບັນທຶກຂອງສາທາຣະນະຊົນ ແລະ ຈະຖືກສົ່ງໃສ່ມືໃຫ້ຈຳເລີຍ. ຖ້າຫາກວ່າທ່ານບໍ່ຂຽນເຫດການອັນເຈາະຈົງຂອງການຜິດຖຽງກັນຮ້າຍແຮງໃນຄອບຄົວໃສ່ໃນຄຳໃຫ້ການຂອງທ່ານ, ທ່ານອາດຈະບໍ່ມີໂອກາດທີ່ຈະບອກສານໃນເວລາຟັງເຣື່ອງ.

ທຳອິດຈົ່ງອ່ານການຕີຄວາມໝາຍຂອງການຜິດຖຽງຮ້າຍແຮງໃນຄອບຄົວຢູ່ໃນບ່ອກຂ້າງເທິງຂອງ "ຄຳໃຫ້ການ". ແລ້ວ, ອ່ານ"ຄຳໃຫ້ການ" ໃຫ້ໝົດກ່ອນທີ່ທ່ານຈະເລີ້ມຕົ້ນຂຽນ. ມີຄຳແນະນຳເພື່ອຊ່ວຍເຫລືອທ່ານຈັດແຈງຄວາມຄິດຂອງທ່ານໃຫ້ເຂົ້າກັນ.

ບັນລະຍາຍຢ່າງຖືກຕ້ອງແນ່ນອນວ່າແມ່ນຫຍັງໄດ້ເກີດຂຶ້ນເມື່ອເວລາທ່ານຖືກຂົ່ມຂູ່ ຫລື ທຳຮ້າຍໃຫ້ເຈັບ. ທ່ານຈະຂຽນຣາຍລະອຽດໄວ້ໃຫ້ຫົວໜ້າສານອ່ານຍິ່ງຫລາຍຍິ່ງດີເຊັ່ນວ່າວັນທີ ແລະ ເວລາ, ຈະເປັນການຊ່ວຍເຫລືອໄດ້ຫລາຍຂຶ້ນສຳລັບຈ່າສານ. ໃຫ້ຂຽນຕົວຢ່າງ ຫລາຍໆອັນຖ້າຫາກວ່າທ່ານສາມາດເຮັດໄດ້. ຖ້າມີຄວາມສຸກເສີນ, ອະທິບາຍວ່າເປັນຫຍັງເພື່ອວ່າສານສາມາດອອກໃບຄຳສັ່ງປົກປ້ອງຊົ່ວຄາວໂດຍທັນທີກ່ອນການຟັງເຣື່ອງ. ນອກຈາກໃສ່ຣາຍລະອຽດທີ່ບອກເອົາຢູ່ໃນໃບແຈ້ງການ, ທ່ານຈະຕ້ອງໄດ້ລວມເອົາ:

- ຖ້າຫາກວ່າຈຳເລີຍໄດ້ເຮັດໃຫ້ຄົນອື່ນບາດເຈັບ;
- ຖ້າຫາກວ່າຈຳເລີຍໄດ້ຖືກຈັບກຸມຕົວ;
- ຖ້າຫາກວ່າເຈົ້າໜ້າທີ່ຕຳຣວດໄດ້ມາ ເຖິງແມ່ນວ່າບໍ່ມີການຈັບກຸມກໍ່ຕາມ;
- ຖ້າຫາກວ່າທ່ານເຄີຍຖືກຕິດຕາມຈອບແນມ, ອະທິບາຍແບບຊ້ຳຮອຍຂອງການຈອບແນມເບິ່ງ;

ຕົວຢ່າງ:

> ເປັນການດີກວ່າທີ່ຈະກ່າວວ່າ "ໃນວັນອາທິດ, ແຈນຢູຣີ 12 ເວລາ 2:00 ໂມງເຊົ້າ, ທ. ເທຣີ ໄດ້ຕົບໜ້າຂ້ອຍແທນທີ່ຈະວ່າ ໃນວັນອາທິດ ທ. ເທຣີ ທຳຮ້າຍຂ້ອຍ"
>
> ຈະເປັນການດີກ່າວທີ່ຈະກ່າວວ່າ "ທ້າວ ເທຣີ ຂົ່ມຂູ່ວ່າຈະຂ້າຂ້ອຍຖ້າຫາກວ່າຂ້ອຍໜີຈາກບ້ານໄປ" "ລາວເວົ້າວ່າເຈົ້າໜີໄປ ແລະ ຂ້ອຍຈະຂ້າເຈົ້າຖິ້ມ" ດີກວ່າຈະເວົ້າວ່າ "ເທຣີລາວຂົ່ມຂູ່ຂ້ອຍ."

ຈົ່ງພະຍາຍາມໃຊ້ຄຳເວົ້າຕົວຈິງແນ່ນອນຂອງຈຳເລີຍໃນເມື່ອເວລາທ່ານຖືກຂົ່ມຂູ່ຈະທຳຮ້າຍ "ຮ່າງກາຍ"

ຖ້າຫາກວ່າສິ່ງໃດສິ່ງນຶ່ງຂອງຣາຍລະອຽດທີ່ຖືກຂໍເອົາບໍ່ກ່ຽວຂ້ອງນຳ, ຂຽນໃສ່ "ບໍ່ກ່ຽວຂ້ອງ" ໃສ່ພາກສ່ວນນັ້ນ.

ຈົ່ງເລືອກບ່ອກທີ່ເໝາະສົມຖ້າຫາກວ່າມີຢາເສພຕິດກ່ຽວຂ້ອງນຳ.

ໃນເມື່ອທ່ານຂຽນບອກກ່າວເຣື່ອງລາວຂອງທ່ານແລ້ວ, ໃສ່ວັນທີຂອງມື້ນີ້ໃສ່ໃນແຖວວັນທີ ແລະ ຂຽນຊື່ເມືອງບ່ອນທີ່ທ່ານປະກອບຄຳຮ້ອງ. ເຊັນຊື່ໃສ່ໃນໃບຄຳຮ້ອງ.

ຈຳເລີຍອາດຈະຕ້ອງໄດ້ສົ່ງເອກສານຕອບຕໍ່ຄຳຟ້ອງຮ້ອງສານອັນນີ້ໄປໃຫ້ທ່ານໂດຍຍື່ນໃສ່ມື. ທ່ານມີສິດທີ່ຈະປົກປິດຮັກສາທີ່ຢູ່ ເຮືອນຂອງທ່ານໄວ້ເປັນຄວາມລັບໄດ້. ຖ້າຫາກວ່າທ່ານມີທີ່ຢູ່ບ່ອນນຶ່ງ, ກະຣຸນາເອົາທີ່ຢູ່ໃຫ້, ບ່ອນອື່ນນອກຈາກບ້ານເຮືອນຂອງທ່ານ, ທີ່ທ່ານຈະຮັບເອົາເອກສານທາງກົດໝາຍ.

ດັ່ງຕໍ່ໄປນີ້ແມ່ນຕົວຢ່າງຂອງໃບຄໍາຮ້ອງຍື່ນຂໍ້ນສານສໍາລັບຄໍາສັ່ງປົກປ້ອງຮັກສາ (ທຸກໆກໍຣະນີ)

# ຕົວຢ່າງ

| | |
|---|---|
| **ສານແຫ່ງຣັດວໍຊິງຕັນ**<br>**ສໍາລັບ** | |
| ______________________<br>ຜູ້ຟ້ອງຮ້ອງ (ໂຈດ)<br>ຕໍ່<br>______________________<br>ຜູ້ຟ້ອງຮ້ອງ (ຈໍາເລີຍ) | **ເລກທີ**<br>**ຄໍາຮ້ອງຍື່ນຂໍ້ນສານສໍາລັບຄໍາສັ່ງການປົກປ້ອງຮັກສາ**<br>PETITION FOR ORDER FOR PROTECTION (PTORPRT) (All Cases) |

| | |
|---|---|
| 1. ☐ ຂ້າພະເຈົ້າແມ່ນ ☐ ສະມາຊິກໃນຄອບຄົວ ຫລື ເຮືອນຊານຂອງຂ້າ ພະເຈົ້າເປັນຜູ້ເຄາະຮ້າຍຂອງການຜິດຖຽງຮຸນແຮງໃນຄອບຄົວຊຶ່ງຖືກກະທໍາຜິດໂດຍຈໍາເລີຍຕາມທີ່ຖືກບັນລະຍາຍໃນຄໍາໃຫ້ຄວາມຢູ່ຂ້າງລຸ່ມນີ້. | 3. ອາຍຸຂອງຂ້າພະເຈົ້າແມ່ນ:<br>☐ ຕໍ່າກວ່າ 16 ☐ 16 ຫລື 17 ☐ 18 ປີ ແກ່ກວ່າ<br><br>ອາຍຸຂອງຈໍາເລີຍແມ່ນ:<br>☐ ຕໍ່າກວ່າ 16 ☐ 16 ຫລື 17 ☐ 18 ປີ ແກ່ກວ່າ |
| 2. ☐ ຂ້ອຍອາສັຍຢູ່ໃນເທສບານບ່ອນນີ້.<br>☐ ຂ້ອຍໜີອອກຈາກເຮືອນຂ້ອຍຍ້ອນການກົດຂີ່ຂົ່ມເຫັງ ແລະອັນນີ້ແມ່ນເທສບານຂອງບ່ອນຢູ່ໃໝ່ ຫລື ເກົ່າຂອງຂ້ອຍ. | |

4. ຄວາມສໍາພັນຂ້າພະເຈົ້າກັບຈໍາເລີຍແມ່ນ:

| | | |
|---|---|---|
| | ☐ ໄພ້ ຫລື ເຂີຍ | ☐ ຢູ່ຮ່ວມກັນໃນອະດີດ |
| ☐ ພັນລະຍາສາມີ | ☐ ຍາດພີ່ນ້ອງຕາມສາຍເລືອດ | |
| ☐ ອະດີດພັນລະຍາສາມີ | ☐ ມີລູກຮ່ວມກັນ | ☐ ພວມມັກຮັກກັນ |
| ☐ ພໍ່ແມ່ ຫລື ລູກ | ☐ ຢູ່ຮ່ວມກັນໃນປັດຈຸບັນ | ☐ ມັນຮັກກັນໃນອະດີດຜ່ານມາ |

5. ປະວັດຂອງເດັກຕໍ່າກວ່າກະສຽນ (ຖ້າກ່ຽວຂ້ອງ) ❐ ບໍ່ມີເດັກກ່ຽວຂ້ອງ

| ຊື່<br>(ຊື່, ຊື່ກາງ, ນາມສະກຸນ) | ອາຍຸ | ເຊື້ອຊາດ | ເພດ | ຄວາມສໍາພັນກັບ<br>ຜູ້ຟ້ອງຮ້ອງ (ໂຈດ) | ຄວາມສໍາພັນກັບ<br>ຜູ້ຖືກຟ້ອງຮ້ອງ (ຈໍາເລີຍ) | ຢູ່ອາສັຍກັບ |
|---|---|---|---|---|---|---|
| | | | | | | |
| | | | | | | |
| | | | | | | |
| | | | | | | |
| | | | | | | |
| | | | | | | |

6. ກໍຣະນີສານອື່ນໆ ຫລື ຄຳສັ່ງປັບປັ້ງ, ປົກປ້ອງ ຫລື ບໍ່ມີການຕິດຕໍ່ອື່ນໆທີ່ກ່ຽວຂ້ອງກັບຂ້າພະເຈົ້າ, ເດັກຕໍ່າກວ່າກະສຽນ ແລະ ຈຳເລີຍ:

| | | | |
|---|---|---|---|
| **ເຣື່ອງ CASE NAME** | | | |
| **ເອກສານເລກທີ** | | | |
| **ເທສບານ** | | | |

**ຄຳຮ້ອງຂໍເອົາຄຳສັ່ງປົກປ້ອງຊົ່ວຄາວ:** ເຫດການສຸກເສີນມີປະກົດຢູ່ຕາມທີ່ຖືກບັນລະຍາຍຢູ່ໃນຂໍ້ຄວາມຂ້າງລຸ່ມນີ້: ຂ້າພະເຈົ້າຕ້ອງການຄຳສັ່ງປັບປັ້ງກີດກັ້ນຊົ່ວຄາວໃຫ້ຖືກສັ່ງອອກມາໂດຍທັນທີໂດຍປາສຈາກການແຈ້ງບອກໃຫ້ຈຳເລີຍຊາບຈົນກວ່າມີການຟັງເຣື່ອງເພື່ອຈະຫລີກເວັ້ນການບາດເຈັບຊຶ່ງຈະປົວແປງບໍ່ໄດ້. ຂ້າພະເຈົ້າຂໍຮ້ອງເອົາຄຳສັ່ງສຳລັບການປົກປ້ອງຮັກສາຊົ່ວຄາວ.

ຂ້າພະເຈົ້າຂໍຮ້ອງເອົາຄຳສັ່ງປົກປ້ອງຮັກສາຕິດຕາມການຟັງເຣື່ອງຊຶ່ງຈະ:

| | | |
|---|---|---|
| | | [1] ກີດກັ້ນຖືກກີດກັ້ນຈາກການກໍ່ໃຫ້ເກີດມີການເປັນອັນຕຣາຍຕໍ່ຣ່າງກາຍ, ການບາດເຈັບຕາມຣ່າງກາຍ, ການທຳຮ້າຍຕົວ, ລວມທັງການທຳຮ້າຍທາງເພດ, ແລະ ຈາກການທຳຮ້າຍ, ການເຝົ້າຣົບກວນ, ການຂົ່ມຂູ່ ຫລື ການຕິດຕາມຣົບກວນ ☐ ໂຈດ ☐ ເດັກຕໍ່າກວ່າກະສຽນທີ່ຖືກບົ່ງຊື່ຢູ່ໃນຕາຕະລາຂ້າງເທິງນີ້ ☐ ເດັກຕໍ່າກວ່າກະສຽນເຫລົ່ານີ້ເທົ່ານັ້ນ. |
| | | [2] ກີດກັ້ນຖືກກີດກັ້ນສັ່ງຫ້າມບໍ່ໃຫ້ຈຳເຂົ້າມາໃກ້ ແລະ ຕິດຕໍ່ພົວພັນເຂົ້າມາບໍ່ວ່າໃນກໍຣະນີໃດໆດ້ວຍຕົວເອງ ຫລື ຜ່ານ ທາງຜູ້ອື່ນ, ດ້ວຍທາງໂທຣະສັບ, ທາງຈົດໝາຍ, ຫລື ດ້ວຍທາງອື່ນໆ ທາງກົງ ຫລື ທາງອ້ອມ, ຍົກເວັ້ນແຕ່ຈະເປັນ ການສົ່ງທາງໄປສະນີ ຫລື ໜັງສືຜ່ານທາງສານໂດຍຝ່າຍທີ 3 ຫລື ໂດຍການຕິດຕໍ່ຈາກທະນາຍຄວາມຂອງຈຳເລີຍນຳ. ☐ ໂຈດ ☐ ເດັກຜູ້ທີ່ມີຊື່ຢູ່ຕາຕະ ລາງຂ້າງເທິງນີ້ ☐ ເດັກຕໍ່າກະສຽນເຫລົ່ານີ້ເທົ່ານັ້ນ. |
| | | [3] ກີດກັ້ນບໍ່ໃຫ້ນຳຈຳເລີຍ ☐ ບ່ອນຢູ່ຮ່ວມກັນຂອງຈຳເລີຍກັບຂ້າພະເຈົ້າ ☐ ໃນບ່ອນທີ່ພັກອາສັຍຂອງຂ້າພະເຈົ້າ, ☐ ໃນທີ່ທຳງານຂອງ ຂ້າພະເຈົ້າ ☐ ໃນໂຮງຮຽນຂອງຂ້າພະເຈົ້າ ☐ ໃນບ່ອນຝາກເດັກ ຫລື ໂຮງຮຽນຂອງ, ☐ ເດັກຜູ້ທີ່ມີຢູ່ວັກ ທີຫ້າຂ້າງເທິງນີ້ ☐ ເດັກຕໍ່າກວ່າກະສຽນເທົ່ານັ້ນ.<br><br>☐ ອື່ນໆ<br><br>ທ່ານມີສິດທີ່ຈະເກັບຮັກສາທີ່ຢູ່ເຮືອນຂອງທ່ານໃວ້ເປັນຄວາມລັບ. |
| | | [4] ສັ່ງໃຫ້ຈຳເລີຍຍ້າຍອອກຈາກບ່ອນຢູ່ຮ່ວມກັນຂອງພວກເຮົາ ແລະ ຍົກໃຫ້ຂ້າພະເຈົ້າ |
| | | [5] ຫ້າມບໍ່ໃຫ້ຈຳເລີຍເຂົ້າມາໄດ້ໂດຍຮູ້ຈັກດີ, ຫລື ການຢູ່ໂດຍຮູ້ຈັກດີພາຍໃນ ______ (ຣະຍະທາງ) ຂອງ ☐ ບ່ອນຢູ່ຮ່ວມກັນຂອງພວກເຮົາ ☐ ເຮືອນຂອງຂ້າພະເຈົ້າ, ☐ ໂຮງຮຽນຂອງຂ້າພະເຈົ້າ ☐ ໃນບ່ອນຝາກເດັກ ຫລື ໂຮງຮຽນ ☐ ເດັກຜູ້ທີ່ມີຊື່ຢູ່ໃນວັກທີ 5 ຂ້າງເທິງນີ້, ☐ ເດັກຕໍ່າກະສຽນເຫລົ່ານີ້ເທົ່ານັ້ນ.<br><br>☐ ອື່ນໆ: |

| | | |
|---|---|---|
| | | 6 ໂຈດໄດ້ມີສິດຄອບຄອງສິ່ງຂອງສ່ວນຕົວອັນສຳຄັນຂອງຂ້າພະເຈົ້າ, ລວມທັງສິ່ງຂອງຕ່າງໆທີ່ກ່າວຕໍ່ໄປນີ້: |
| | | 7 ໂຈດຖືກອະນຸມັດໃຫ້ໄດ້ມີສິດໃຊ້ດັ່ງຕໍ່ໄປນີ້::<br>ປີ, ຍີ່ຫໍ້ ແລະ ແບບ ________________ ເລຂທະບຽນຣົດເລຂທີ: ________ |
| | | 8 ອື່ນໆ: |
| | | 9 ອອກຄຳສັ່ງໃຫ້ຈຳເລີຍຕ້ອງໄປຮັບການປິ່ນປົວ ຫລື ຮັບການອົບຮົມປຶກສາຕາມເໝາະສົມ. |
| | | 10 ບັງໃຫ້ຈຳເລີທີ່ຈະຈ່າຍຄ່າທຳນຽມ ແລະ ຄ່າໃຊ້ຈ່າຍຂອງຄ່າຟ້ອງຂື້ນສານຈາກຈຳເລີຍເປັນຈຳນວນ |
| | | 11 ມີຜົນບັງຄັບໃຊ້ຢູ່ນານກວ່ານຶ່ງປີຍ້ອນວ່າຈຳເລີຍຄົງຈະກະທຳການຜິດຖຽງຮຸນແຮງໃນຄອບຄົວໃໝ່ອີກຕໍ່ຂ້າພະເຈົ້າຖ້າຫາກວ່າຄຳສັ່ງໃນກຳນົດໃນນຶ່ງປີ. |
| ໝາຍໃສ່ສິ່ງຕໍ່ລົງໄປນີ້ເທົ່ານັ້ນຖ້າຫາກວ່າເອົາການປົກປ້ອງທີ່ຖືກສັ່ງອອກມາກ່ຽວຂ້ອງນຳເດັກຕ່ຳກວ່າກະສຽນ: | | |
| | | 12 ອີງຕາມການປັຽນປານເດັກທີ່ຖືກສັ່ງອອກມາໂດຍສານທຸກໆຢ່າງ, ມອບໝາຍໃຫ້ຂ້າພະເຈົ້າເປັນຜູ້ເບິ່ງແຍງດູແລ, ຄຸ້ມຄອງ ແລະ ຄວບຄຸມຂອງ ☐ ເດັກຕ່ຳກວ່າກະສຽນຜູ້ທີ່ຖືກບົ່ງຊື່ຢູ່ໃນວັກທີ 5 ຂ້າງເທິງນີ້ ☐ ເດັກຕ່ຳກະສຽນເຫລົ່ານີ້ເທົ່ານັ້ນ: |
| | | 13 ປົບປັ້ງຈຳເລີຍຖືກຈາກການເຂົ້າມາແຊກແຊງນຳການຄຸ້ມຄອງຮ່າງກາຍ ຫລື ຕາມກົດໝາຍຂອງ ☐ ເດັກຕ່ຳກວ່າກະສຽນ ຜູ້ທີ່ຖືກບົ່ງຊື່ຢູ່ໃນຕາຕະລາງຂ້າງເທິງນີ້ ☐ ເດັກຕ່ຳກະສຽນເຫລົ່ານີ້ເທົ່ານັ້ນ: |
| | | 14 ປົບປັ້ງຈຳເລີຍຈາກການພາອອກໄປຈາກຣັດ: ☐ ເດັກຕ່ຳກວ່າກະສຽນ ຜູ້ທີ່ຖືກບົ່ງຊື່ຢູ່ໃນວັກທີ 5 ຂ້າງເທິງນີ້ ☐ ເດັກຕ່ຳກະສຽນເຫລົ່ານີ້ເທົ່ານັ້ນ: |

**ຄຳຮ້ອງຂໍເພື່ອຂໍການຊ່ວຍເຫລືອພິເສດຈາກເຈົ້າໜ້າທີ່ຕຳຣວດ:**

ຂ້າພະເຈົ້າຂໍຮ້ອງໃຫ້ສານຈົ່ງໄດ້ອອກຄຳສັ່ງໃຫ້ເຈົ້າໜ້າທີ່ຕຳຣວດທີ່ເໝາະສົມທີ່ຈະຊ່ວຍເຫລືອຂ້າພະເຈົ້າໃນການເກັບກຳເອົາ:

☐ ການຄອບຄອງທີ່ຢູ່ອາສັຍຂອງຂ້າພະເຈົ້າ ☐ ການໃຊ້ຣົດຕາມທີ່ສານສັ່ງໃຫ້

☐ ການຄອບຄອງສິ່ງຂອງທີ່ເປັນຂອງສ່ວນຕົວອັນສຳຄັນຂອງຂ້າພະເຈົ້າຢູ່ທີ່ ☐ ບ່ອນຢູ່ຮ່ວມກັນ ☐ ບ່ອນຢູ່ຂອງຈຳເລີຍ

☐ ອື່ນໆ:

☐ ການຄຸ້ມຄອງຂອງ ☐ ເດັກຕ່ຳກວ່າກະສຽນຜູ້ທີ່ຖືກບົ່ງຊື່ຢູ່ໃນວັກທີ 5 ຂ້າງເທິງນີ້ ☐ ເດັກຕ່ຳກະສຽນເຫລົ່ານີ້ເທົ່ານັ້ນ (ຖ້າມີ)

______________________________________________________________

_____________________________________________________________.

☐ ອື່ນໆ: _____________________________________________________.

ການຜິດຖຽງຮຸນແຮງໃນຄອບຄົວລວມເອົາການເປັນອັນຕະລາຍຕໍ່ຮ່າງກາຍ, ການເຮັດໃຫ້ບາດເຈັບທາງຮ່າງກາຍ, ການຕິດຕາມສອດແນມ, ຫລື ການນຳຄວາມຢ້ານກົວມາໃຫ້ໃນການເປັນອັນຕະລາຍຊຶ່ງເຫັນວ່າຈະຕ້ອງເກີດໃນຣະຫວ່າງສະມາຊິກຂອງຄອບຄົວ ຫລື ຂອງເຮືອນຊານ.

**ຄຳໃຫ້ການ:** ຈຳເລີຍໄດ້ກະທຳຜິດຖຽງຮຸນແຮງໃນຄອບຄົວຕາມຕໍ່ລົງໄປນີ້. (ບັນລະຍາຍ ການກະທຳອັນເຈາະຈົງ ຂອງການຜິດຖຽງຮຸນແຮງໃນຄອບຄົວ ແລະ ວັນທີປະມານ, ເລີ້ມຕົ້ນດ້ວຍ ການກະທຳໃນໝໍ່ໆທີ່ສຸດ. ທ່ານຄວນບອກເວລາຕຳຣວດໄດ້ມາ. ບັນລະຍາຍເຫດການ ຫລື ການຂົ່ມຂູ່ຮຸນແຮງອັນໝໍ່ໆກວ່າໝູ່ທີ່ສຸດ ແລະ ວັນທີ: ______________________________

____________________________________________________________

____________________________________________________________

____________________________________________________________

____________________________________________________________

____________________________________________________________

____________________________________________________________

____________________________________________________________

____________________________________________________________

____________________________________________________________

____________________________________________________________

____________________________________________________________

____________________________________________________________

ຈົ່ບັນລະຍາຍ/ເລົ່າເຫດການທີ່ເກີດຂຶ້ນໃນອະດີດທີ່ທ່ານໄດ້ປະສົບປະການຄວາມຮຸນແຮງ, ຊຶ່ງທ່ານຢ້ານວ່າຈະຖືກບາດເຈັບ ຫລື ຈຳເລີຍຂົ່ມຂູ່ວ່າຈະ ເຮັດໃຫ້ທ່ານເຈັບ ຫລື ຂ້າທ່ານ: ______________________________

____________________________________________________________

____________________________________________________________

____________________________________________________________

____________________________________________________________

____________________________________________________________

____________________________________________________________

____________________________________________________________

____________________________________________________________

____________________________________________________________

____________________________________________________________

____________________________________________________________

ຈົ່ງບັນລະຍາຍ/ເລົ່າຄວາມຮຸນແຮງ ຫລື ການຂົ່ມຂູ່ທຸກໆຢ່າງຕໍ່ເດັກນ້ອຍ: ______________________________

____________________________________________________________

____________________________________________________________

____________________________________________________________

____________________________________________________________

____________________________________________________________

____________________________________________________________

____________________________________________________________

____________________________________________________________

____________________________________________________________

ອະທິບາຍເຖີງການປິ່ນປົວພະຍາບານທີ່ທ່ານໄດ້ຮັບ ແລະ ສຳລັບຫຍັງ: ____________________

ຈົ່ງບັນລະຍາຍ/ເລົ່າການຂົ່ມຂູ່ ຫລື ການປະພຶດໃດໆຂອງຈຳເລີຍວ່າຈະຂ້າຕົວຕາຍ: ____________________

ຈຳເລີຍເປັນເຈົ້າຂອງອາວຸດ ຫລື ມີອາວຸດຢູ່ໃນຄວາມຄຸ້ມຄອງບໍ? ☐ ມີ ☐ ບໍ່ມີ

ຈຳເລີຍໃຊ້ປືນ, ອາວຸດ, ຫລື ວັດຖຸເພື່ອຂົ່ມຂູ່ ຫລື ທຳຮ້າຍທ່ານບໍ? ກະຣຸນາອະທິບາຍ:

ຖ້າຫາກທ່ານຂໍຮ້ອງໃຫ້ສານອອກຄຳສັ່ງປົກປ້ອງຮັກສານານກວ່ານຶ່ງປີ, ຈົ່ງອະທິບາຍເຖີງເຫດຜົນ: ____________________

ອື່ນໆ: ____________________

(ຖ້າເຈັ້ຽບໍ່ພໍໃຫ້ໃຊ້ເຈັ້ຽແຜ່ນອື່ນຕື່ມ)

ຈົ່ງໝາຍບ່ອກທີ່ເໝາະສົມໃນຖ້າຫາກວ່າຢາເສພຕິດໄດ້ກ່ຽວຂ້ອງນຳ: ☐ ເຫລົ້າ ☐ ຢາເສພຕິດ ☐ ອື່ນໆ ____________

ຂ້າພະເຈົ້າຂໍຢັ້ງຢືນພາຍໃຕ້ການປັບໃໝລົງໂທດຂອງການເວົ້າເທັດພາຍໃຕ້ກົດໝາຍຂອງຣັດວໍຊິງຕັນວ່າທຸກສິ່ງທຸກຢ່າງທີ່ກ່າວມານີ້ແມ່ນເປັນຄວາມຈິງ ແລະ ຖືກຕ້ອງທຸກຢ່າງ

ວັນທີ____________________ ທີ່ ______________________________ ວໍຊິງຕັນ

______________________________

ລາຍເຊັນຂອງຜູ້ຮ້ອງທຸກ

ທ່ານມີສິດທີ່ຈະເກັບຮັກສາທີ່ຢູ່ບ້ານຂອງທ່ານໃວ້ເປັນຄວາມລັບ, ຖ້າຫາກວ່າທ່ານມີບ່ອນຢູ່ບ່ອນນຶ່ງ, ກະຣຸນາບອກທີ່ຢູ່ນອກຈາກບ່ອນຢູ່ຂອງທ່ານ, ບ່ອນທີ່ທ່ານຈະຮັບເອົາເອກສານທາງກົດໝາຍ: ____________________